ຂັ້ນຕອນການຜະລິດລູກແບ້

08

1 ການເລືອກສະຖານທີ່

- ເລືອກສະຖານທີ່ເປັນພື້ນທີ່ໂນນ ແລະ ແຫ້ງເພື່ອຮັບປະກັນບໍ່ໃຫ້ນ້ຳຖ້ວມເວລາຝົນຕົກ.
- ຫ່າງໄກຈາກເຮືອນປະມານ 10 - 30 ແມັດ ຢູ່ທາງປາຍລົມ ເພື່ອຮັບປະກັນບໍ່ໃຫ້ກິ່ນເໝັນພັດໃສ່ຄົນ
- ຖ້າລ້ຽງໃນຈຳນວນຫຼາຍ ຕ້ອງມີສະຖານທີ່ກວ້າງເຊັ່ນດິນຄັງ, ດິນສວນ,...ແລະ ຢູ່ຫ່າງໄກຈາກບ້ານເລັກນ້ອຍ
- ຄອກແບ້ຈະຕ້ອງມີສິ່ງປ້ອງກັນຝົນ, ກັນແສງແດດ (ມີຜ້າກັນແສງ) ຫຼື ມີຕົ້ນໄມ້ຕາມບໍລິເວນຄອກ ແລະ ມີລົມລ່ວງດີ.

2 ການສ້າງຄອກ

2.1 ການສ້າງຄອກໝູຢູ່ເທິງໜອງປາ

- ການປຸກສ້າງຄອກຄວນຄຳນຶງເຖິງຄວາມເໝາະສົມກັບສະພາບພື້ນທີ່ ອາດຈະສ້າງຄອກແບບຍົກພື້ນສູງປະມານ 100 ຫາ 120 ຊັງຕີແມັດ.
- ອຸປະກອນທີ່ໃຊ້ເຂົ້າໃນການປຸກສ້າງຄອກ ຄວນເປັນວັດຖຸທີ່ຫາໄດ້ງ່າຍ ໃນທ້ອງຖິ່ນນັ້ນເຊັ່ນ: ໄມ້ໄຜ່, ໄມ້ພາງ, ໄມ້ແປຮູບ, ...ຫຼັງຄາອາດຈະມຸງດ້ວຍຫຍ້າ, ຝາກ, ສັງກະສີ.
- ຕັ້ງສະໜລຽງໄປຕາມທິດຕາເວັນອອກຫາທິດຕາເວັນຕົກ ເພື່ອໃຫ້ມີແສງແດດສ່ອງເຂົ້າ ແລະ ລະບາຍອາກາດໄດ້ດີ.
- ພື້ນຄອກປູດ້ວຍໄມ້ແປ້ນ/ໄມ້ດິ້ວ ຫຼື ໄມ້ປີກເສດເຫຼືອ ມີຄວາມຫ່າງປະມານ 1,5-2.0 ຊມ ແຕ່ບໍ່ຄວນຫ່າງ ຫຼື ຖີ່ຫຼາຍເກີນໄປ ເພາະຂີ້ແບ້ຈະບໍ່ຫຼອດ.
- ຝາຂ້າງແອ້ມດ້ວຍໄມ້ແປ້ນ,ໄມ້ດິ້ວ, ໄມ້ກົມ, ກະແຕະ, ຕະໜ່າງເຫຼັກ ແຕ່ຕ້ອງຮັບປະກັນທາງໃນຄອກອາກາດຕ້ອງໂລ່ງດີ.
- ຖ້າເປັນຍາມຝົນ ແລະ ຍາມໜາວຕ້ອງມີຜ້າໜ່າງບັງຂ້າງບໍ່ໃຫ້ຝົນຊາດເຂົ້າ ແລະ ປ້ອງກັນອາກາດໜາວເຢັນ.
- ຮາງອາຫານຄວນເຮັດໄວ້ຂ້າງນອກເພື່ອຫຼີກລຽງບັນຫາແບ້ຂຶ້ນນອນແລະ ຂີ້ໃສ່ ຄວາມສູງຈາກພື້ນຄອກຫາຮາງອາຫານປະມານ 30-35 ຊມ.
- ອີກຂ້າງໜຶ່ງຄວນມີຮາງນ້ຳ ຫຼື ຈະໃຊ້ອຸປະກອນອື່ນເຊັ່ນຄຸ ຫຼື ຊາມ.

ການບັນຈຸແບ້ໃສ່ຄອກ:

  - ແບ້ພໍ່ພັນ 2,8 ຕາແມັດ/ໂຕ
  - ແບ້ແມ່ທ້ອງຫວ່າງ 1,5 ຕາແມັດ/ໂຕ,
  - ແບ້ຖືພາມານ ແລະ ລ້ຽງລູກ 1,9 ຕາແມັດ/ໂຕ,
  - ແບ້ລຸ້ນບ່າວສາວ 0,7 ຕາແມັດ/ໂຕ, ,
  - ແບ້ ນ້ອຍ 0,3 ຕາແມັດ/ໂຕ.

3 ການຄັດເລືອກພໍ່ແມ່ພັນ

3.1 ການຄັດເລືອກແມ່ພັນ

- ແມ່ພັນຕ້ອງມີຮູບຮ່າງໃຫຍ່ ລຳໂຕຍາວ, ມີເຕົ້ານົມ ຂວັ້ນນົມໃຫຍ່ ແລະ ສະເໝີກັນ ມີປະຫວັດເກີດຈາກແມ່ທີ່ລ້ຽງລູກດີ ມີເປີເຊັນລູກແຝດສູງ ແລະ ລ້ຽງລູກດີ.
- ບໍ່ມີປະຫວັດການຕິດເຊື້ອພະຍາດປາກເປື່ອຍແບ້ ແລະ ປາກເປື່ອຍລີງເລັບມາກ່ອນ.
- ຕ້ອງເປັນແບ້ທີ່ຊື້ມາຈາກສະຖານທີ່ລ້ຽງມີຄວາມເຊື່ອຖືໄດ້(ບໍ່ມີບັນຫາດ້ານການຕິດເຊື້ອພະຍາດຕ່າງໆ) ແລະ ຕ້ອງມີສຸຂະພາບແຂງ ສົມບູນດີ.
- ບໍ່ເລືອກແບ້ທີ່ມີຂົນຢອງເປີເປື້ອນ, ຈ່ອຍຜອມ, ແບ້ເຖົ້າ ແລະ ມີອາການຊຶມ ຫຼື ເຈັບຕາ.

3.2 ການຄັດເລືອກພໍ່ພັນ

- ຕ້ອງຄັດເລືອກແບ້ຜູ້ທີ່ມາຈາກແມ່ພັນທີ່ໃຫ້ລູກແຝດ, ມີຂະໜາດໂຕໃຫຍ່ ເປັນແບ້ໜຸ່ມ.
- ນ້ຳໜັກປະມານ 25 ກິໂລຂຶ້ນໄປມີສຸຂະພາບສົມບູນແຂງແຮງດີ ແລະ ກະຕືລືລົ້ນທີ່ຈະປະສົມພັນກັບແບ້ເພດແມ່.
- ເປັນພໍ່ພັນທີ່ນຳມາຈາກບ່ອນອື່ນ, ເລີ້ມໃຫ້ຄຸມຝູງເມື່ອອາຍຸ 1 - 1,5 ປີ ຕໍ່ເພດແມ່ 10-20 ໂຕ ຖ້າອາຍຸ 1,5 – 2 ປີແລ້ວຄວນໃຊ້ຄຸມຝູງແມ່ພັນ 20-25ໂຕ.
- ບໍ່ຄວນເລືອກແບ້ຜູ້ທີ່ເຖົ້າແລ້ວ ເພາະປະສິດທິພາບນ້ຳເຊື້ອຈະບໍ່ແຂງ ແຮງ ແລະ ນຳໃຊ້ໄດ້ບໍ່ດົນ.
- ແລະ ບໍ່ຄວນເລືອກແບ້ໜຸ່ມເກີນໄປ ອາຍຸທີ່ເໝາະສົມຕ້ອງ 1,6 ປີ
- ຄວນລ້ຽງແຍກຄອກພໍ່ພັນຕ່າງຫາກ ໃຫ້ອາຫານພຽງພໍ ທີ່ມີພະລັງ. ງານສູງ ແລະ ໄດ້ອອກກຳລັງກາຍເປັນປະຈຳ

4 ການປະສົມພັນ

- ປົກກະຕິແບ້ເພດຜູ້ຈະມີການຈະເລີນເຕີບໂຕໄວ ແລະ ຖືເຊີງໄວກວ່າແບ້ເພດແມ່ ຫາກລ້ຽງປ່ອຍລວມກັນ ແບ້ຈະປະສົມພັນກັນໄວ ຊຶ່ງມີຜົນເສຍທີ່ສຳຄັນດັ່ງນີ້:
- ແບ້ແມ່ຍັງມີການຈະເລີນເຕີບຍັງບໍ່ທັນສົມບູນ ເວລາເກີດລູກຈະບໍ່ມີນ້ຳນົມພຽງພໍ, ສຸຂະພາບແມ່ອ່ອນເພຍ ແລະ ລູກຈະບໍ່ແຂງແຮງ.
- ການປະສົມພັນໃນສາຍເລືອດໃກ້ຄຽງຫຼາຍຂຶ້ນ(ເຊີງເອື້ອຍ, ເຊີງນ້ອງ) ຈະບໍ່ເປັນຜົນດີ ສະນັ້ນຄວນແຍກແບ້ຜູ້ອອກລ້ຽງຕ່າງຫາກ ແລະ ລ້ຽງເມື່ອໃຫຍ່ໄດ້ລາຄາໃຫ້ຂາຍອອກ.
- ບໍ່ຄວນໃຫ້ແບ້ແມ່ໄດ້ປະສົມພັນກ່ອນອາຍຸ 6 ເດືອນ ແລະ ຄວນປະສົມເມື່ອອາຍຸ 7 ເດືອນ.

5 ການເກີດລູກ ແລະ ການອານຸບານແບ້ນ້ອຍ

5.1 ການເກີດລູກ

- ກະໂພກຂະຫຍາຍກວ້າງ, ຫຼັງແອນລົງ(ທ້ອງໃຫຍ່ແລະ ໜັກຂຶ້ນ) , ກິນອາຫານນ້ອຍລົງ.
- ເຕົ້ານົມໃຫຍ່ຂຶ້ນຫຼາຍ ແລະ ຂວັ້ນນົມຕຶງຂຶ້ນ, ເລີ້ມມີນ້ຳນົມ.
- ອະໄວຍະເພດຕຶ່ງ ແດງ , ມີນ້ຳເມືອກໄຫຼຍ້ອຍອອກມາ.
- ຈະບໍ່ນອນ, ດຽວນອນ ດຽວຍ່າງວົນໄປມາໃຊ້ຕີນເກາະຂ່ຍພື້ນ, ພູດລຸກພູນອນລົງພື້ນເບິ່ງ, ຢ່ຽວຢັດ.
- ຊ້ວງເບື້ອງຂວາກ່ອນເກີດປະມານ 3 ຊົ່ວໂມງຈະໂນນສວດອອກເຫັນໄດ້ຊັດເຈນ.
- ມີນ້ຳເມືອກໄຫຼອອກມາຈາກຊ່ອງຄອດ ແລະ ເມື່ອມີຖົງນ້ຳໂພ່ອອກມາຈະແຕກ ຈາກນັ້ນແບ້ນ້ອຍເກີດອອກມາພາຍໃນ 2-3 ນາທີ, ຖ້າມີ 2 ຫຼື 3 ໂຕມັນກໍ່ຈະຄ່ອຍໂພ່ອອກມາຕາມຫຼັງພາຍໃນ 3 - 5 ນາທີ.





5.2 ການອານຸບານແບ້ນ້ອຍ

- ຄອກສຳລັບລ້ຽງແບ້ນ້ອຍເກີດໃໝ່ຕອ້ງແຫ້ງ ສະອາດ ແລະ ມີນ້ຳສະອາດ, ໃຊ້ຢາໄອໂອດີນເຊັດໄສ້ບື (ຕັດສາຍບືຈຶ່ງໄວ້ 3 ຊມ).
- ເຊັດນ້ຳເມືອກອອກຈາກປາກ,ດັງໃຫ້ຫັນໃຈສະດວກ.
- ເຊັດໂຕໃຫ້ແຫ້ງດ້ວຍແພ ຫຼື ຫຍ້າແຫ້ງ (ແບ້ນ້ອຍຈະຢືນໄດ້ພາຍໃນ15ນາທີ).
- ໃຫ້ກິນນ້ຳນົມເຫຼືອງທັນທີພາຍໃນ 1-18 ຊົ່ວໂມງຫຼັງເກີດ.
- ຖ້າແບ້ນ້ອຍບໍ່ຮູ້ຈັກດູດໃຫ້ບີບເອົານ້ຳນົມເຫຼືອງໃສ່ເຕົ້ານົມໃຫ້ດູດ(60-120 ຊຊ).
- ນ້ຳນົມເຫຼືອງມີທາດໄຂມັນ, ປະໂຣຕີນ,ແຮ່ທາດ ແລະ ວິຕາມິນສູງກວ່ານົມທຳມະດາ.
- ນ້ຳນົມເຫຼືອງມີສານພູມຄຸ້ມກັນພະຍາດ(Ig)ຊຶ່ງຈະຖືກດູດຊຶມໄດ້ດີພາຍໃນ 18 ຊົ່ວໂມງທຳອິດເທົ່ານັ້ນ.
- ເບື້ອງຕົ້ນແບ້ນ້ອຍຈະບໍ່ທັນມີພູມຄຸ້ມກັນພະຍາດ ແຕ່ພາຍຫຼັງທີ່ໄດ້ກິນນົມເຫຼືອງ ຮ່າງກາຍຈະສ້າງພູມຄຸ້ມກັນຂຶ້ນທັນທີ.
- ການໃຫ້ຢາຂ້າແມ່ທ້ອງອາດຈະໃຫ້ເມື່ອອາຍຸ 30 ວັນ ແລະ ຄັ້ງທີ 2 ເມື່ອອາຍຸ 60 ວັນ(ຕາມສະພາບອາກາດ,ຄວາມຊຸ່ມ,ລະບົບຄອກ).
- ຊ່ວງໄລຍະຫຼັງເກີດລູກ 1 -3 ອາທິດຄວນໃຫ້ແບ້ແມ່ໄດ້ກິນຫຍ້າ, ກ້ອນແຮ່ທາດ ແລະ ນ້ຳສະອາດໃຫ້ກິນພຽງພໍ.
- ຖ້າມີເງື່ອນໄຂຄວນໃຫ້ອາຫານປະສົມຄຸນນະພາບດີ 0,2-0,3ກິໂລ/ມື້.

6 ການລ້ຽງແບ້ນ້ອຍໄລຍະອອກນົມ

- ຄວນໃຫ້ແບ້ອອກນົມເມື່ອອາຍຸ 3 ເດືອນ ແລະ ເອົາໃຈໃສ່ລ້ຽງດູໃຫ້ດີ, ໃຫ້ກິນຫຍ້າພຽງພໍ, ໃຫ້ອາຫານເສີມ ແລະ ກ້ອນແຮ່ທາດຕື່ມອີກ.
- ເພື່ອໃຫ້ແບ້ນ້ອຍແຂງແຮງດີ ສາມາດຂ້າມຜ່ານຊ່ວງວິກິດຂອງຊີວິດ ຊຶ່ງມີຄວາມອ່ອນໄຫວກັບສິ່ງແວດລ້ອມ.
- ເປັນຊ່ວງທີ່ປ່ຽນອາຫານຈາກກິນນົມມາກິນຫຍ້າ ແລະ ສະພາບເງື່ອນໄຂສິ່ງແວດລ້ອມອາດຈະເຮັດໃຫ້ແບ້ນ້ອຍມີການປັບໂຕບໍ່ທັນ ຊຶ່ງເປັນອັນຕະລາຍຕໍ່ສຸຂະພາບຂອງແບ້.
- ເຮັດໃຫ້ເກີດພະຍາດປອດບວມ, ພະຍາດຖອກທ້ອງ, ທ້ອງບິດໄດ້ງ່າຍ, ແບ້ເບື່ອອາຫານ, ຈ່ອຍ, ນານໃຫຍ່(ຄອດ) ແລະ ບາງຄັ້ງຕາຍ.
- ໃນລະບົບການລ້ຽງແບ້ຂອງຊາວກະສິກອນທີ່ປະປ່ອຍຕາມທຳມະຊາດ ຊຶ່ງມີເປີເຊັນການຕາຍສູງເຖິງ 50-60%.
- ແບ້ຜູ້ຄວນແຍກລ້ຽງຕ່າງຫາກ ຫຼີກລ້ຽງການປະສົມພັນໃນສາຍເລືອດໃກ້ຄຽງ ແລະ ປະສົມພັນກ່ອນໄວອາຍຸທີ່ເໝາະສົມ.
- ຄອກສັດຄວນແຫ້ງ ສະອາດດີ ມີແສງແດດສ່ອງເຖິງ ອາກາດໂລ່ງດີ ແລະ ມີຄວາມອົບອຸ່ນໃນຍາມຝົນຕົກ ແລະ ອາກາດໜາວ.

NAFRI

IFAD
Investing in rural people

ໂຄງການກະສິກຳ ເພື່ອໂພຊະນາການ

ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ໋: www.afn.gov.la